**ບົດອອກຂ່າວ**

# ບໍລິສັດ MMG ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ ໃຫ້ການສະໜັບສະໜູນເພີ່ມຕື່ມໃຫ້ແກ່ໜ່ວຍກູ້ໄພສະຫວັນນະເຂດ

16 ມັງກອນ 2018

ບໍລິສັດ MMG ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ (MMG LXML ເຊໂປນ) ໄດ້ມອບອຸປະກອນກູ້ຊີບ-ກູ້ໄພເພີ່ມຕື່ມໃຫ້ແກ່ມູນນິທິອາສາຊ່ວຍເຫຼືອຜູ້ປະສົບໄພ ແຂວງສະຫວັນນະເຂດ ມູນຄ່າ ກວ່າ **51,200,000** ກີບ.

ທີ່ຫ້ອງວ່າການປົກຄອງແຂວງສະຫວັນນະເຂດ, ທ່ານ ສະໝານ ອະເນກາ, ຜູ້ອຳນວຍການ ແລະ ຜູ້ຈັດການພົວພັນກັບຜູ້ມີສ່ວນຮ່ວມ ຂອງ MMG LXML ເຊໂປນ ໄດ້ມອບອຸປະກອນກູ້ຊີບ-ກູ້ໄພ ໃຫ້ແກ່ທ່ານ ພັທ ມະນີເພັດ ບຸບຜາລາສີ - ປະທານ ມູນນິທິອາສາຊ່ວຍເຫຼືອຜູ້ປະສົບໄພ ແຂວງສະຫວັນນະເຂດ ຊຶ່ງໃຫ້ກຽດເຂົ້າຮ່ວມເປັນສັກຂີພິຍານໂດຍທ່ານ ຄຳພູນ ຕຸໄພທູນ, ຮອງເຈົ້າແຂວງສະຫວັນນະເຂດ ແລະ ບັນດາການນຳຈາກທັງສອງຝ່າຍ.

ອຸປະກອນກູ້ຊີບ-ກູ້ໄພ ປະກອບດ້ວຍປໍ້າຄວາມດັນແຮງສູງ ແລະ ສາຍສົ່ງແຮງໄຮໂດຣິກ, ເຄື່ອງຕັດ, ເຄື່ອງງະ, ກະລິກຍົກຄໍ້າ ແລະ ຊຸດອຸປະກອນຄໍ້າ-ຮອງ ເພື່ອຊ່ວຍເຫຼືອຜູ້ປະສົບອຸປະຕິເຫດທີ່ຕິດຄ້າງຢູ່ໃນລົດ ແລະ ສະຖານທີ່ຄັບແຄບ. ພ້ອມກັນນັ້ນຍັງໄດ້ມອບເຄື່ອງປ້ອງກັນຄວາມປອດໄພສ່ວນບຸກຄົນ ຈຳນວນ 6 ຊຸດ ຊຶ່ງປະກອບດ້ວຍໝວກກັນກະທົບ, ແວ່ນຕາເຊບຕີ້, ເສື້ອກັກສະທ້ອນແສງ, ຖົງມືໜັງ ແລະ ເກີບຫົວເຫຼັກ ໃຫ້ແກ່ມູນນິທິເຊັ່ນດຽວກັນ.

ທ່ານ ສະໝານ ອະເນກາ, ຜູ້ອຳນວຍການ ແລະ ຜູ້ຈັດການ ພົວພັນກັບຜູ້ມີສ່ວນຮ່ວມ ຂອງ MMG LXML ເຊໂປນ ກ່າວວ່າ: "ຂ້າພະເຈົ້າມີຄວາມພາກພູມໃຈໃນການຊ່ວຍເຫຼືອດ້ານມະນຸດສະທຳໃນຄັ້ງນີ້".

ທ່ານ ກ່າວຕື່ມອີກວ່າ "ອຸປະກອນກູ້ຊີບ-ກູ້ໄພ ເຫຼົ່ານີ້ມີຄວາມສຳຄັນຫຼາຍໃນການຊ່ວຍເຫຼືອຊີວິດຂອງຜູ້ເຄາະຮ້າຍທີ່ຕິດຄ້າງຢູ່ໃນລົດທີ່ເກີດອຸປະຕິເຫດ".

ໃນເດືອນພະຈິກ 2017, MMG LXML ເຊໂປນ ໄດ້ມອບອຸປະກອນກູ້ຊີບ-ກູ້ໄພ ຈຳນວນໜຶ່ງໃຫ້ແກ່ມູນນິທິອາສາຊ່ວຍເຫຼືອຜູ້ປະສົບໄພ ແຂວງສະຫວັນນະເຂດ ມູນຄ່າ ກວ່າ **23,450,000** ກີບ ປະກອບມີ ສະເຕເຊີຕຽງລົດສຸກເສີນ, ບອດປະລັງກາ, ຖັງອົກຊີແຊນ, ກະເປົາເຄື່ອງປະຖົມພະຍາບານ, ເຄື່ອງດູດສະເລດ ແລະ ໝວກກັນກະທົບ 30 ໜ່ວຍ.

ທ່ານ ສະໝານ ອະເນກາ ກ່າວຕື່ມອີກວ່າ "ທີ່ MMG, ຄວາມປອດໄພແມ່ນຄຸນຄ່າທີ່ສຳຄັນອັນໜຶ່ງ. ໂດຍການເຮັດວຽກຮ່ວມກັນກັບອຳນາດການປົກຄອງແຂວງສະຫວັນນະເຂດ ແລະ ມູນນິທິອາສາກູ້ໄພແຂວງສະຫວັນນະເຂດ, ພວກເຮົາສາມາດຊ່ວຍຮັກສາຊີວິດຂອງຜູ້ຂັບຂີ່ໄດ້ຢ່າງຫຼວງຫຼາຍ".

ອຸປະຕິເຫດທາງທ້ອງຖະໜົນເປັນໜຶ່ງໃນສາເຫດການເສຍຊີວິດສູງສຸດໃນ ສປປ ລາວ. ສະຖິຕິໄດ້ຊີ້ໃຫ້ເຫັນວ່າ, ໃນປີ 2017, ມີອຸປະຕິເຫດເກີດຂຶ້ນກ່ວາ 5,868 ກໍລະນີ, ບາດເຈັບ 9,640 ຄົນ ແລະ ເສຍຊີວິດ 1,053 ຄົນ. ແຂວງສະຫວັນນະເຂດແມ່ນຈັດຢູ່ໃນອັນດັບ 3 ຮອງຈາກນະຄອນຫຼວງວຽງຈັນ ແລະ ແຂວງຈຳປາສັກ ຊຶ່ງມີອຸປະຕິເຫດທັງໝົດ 662 ກໍລະນີ, ບາດເຈັບ 949 ຄົນ ແລະ ເສຍຊີວິດ 114 ຄົນ.

**(ຈົບ)**




**ພາບ:** ວັນທີ 16 ມັງກອນ 2018, ທີ່ຫ້ອງວ່າການປົກຄອງແຂວງສະຫວັນນະເຂດ, ທ່ານ ສະໝານ ອະເນກາ *(ທີ 4 ຈາກຊ້າຍ)*, ຜູ້ອຳນວຍການ ແລະ ຜູ້ຈັດການ ພົວພັນກັບຜູ້ມີສ່ວນຮ່ວມ ຂອງ MMG LXML ເຊໂປນ ໄດ້ມອບອຸປະກອນກູ້ຊີບ-ກູ້ໄພ ມູນຄ່າ 51,200,000 ກີບ ໃຫ້ແກ່ທ່ານ ພັທ ມະນີເພັດ ບຸບຜາລາສີ *(ທີ 2 ຈາກຂວາ)*, ປະທານ ມູນນິທິອາສາຊ່ວຍເຫຼືອຜູ້ປະສົບໄພ ແຂວງສະຫວັນນະເຂດ ຊຶ່ງໃຫ້ກຽດເຂົ້າຮ່ວມເປັນສັກຂີພິຍານໂດຍທ່ານ ຄຳພູນ ຕຸໄພທູນ *(ທາງກາງ)*, ຮອງເຈົ້າແຂວງສະຫວັນນະເຂດ ແລະ ບັນດາການນຳຈາກທັງສອງຝ່າຍ.


<u>**ຂໍ້ມູນເພີ່ມເຕີມ**</u>

**ກະລຸນາຕິດຕໍ່ ທ່ານ ສອນປະເສີດ ນິຣັດໃສ,**
**ຫົວໜ້າສື່ສານ ແລະ ປະຊາສຳພັນ.**

ໂທ: 856 21 268 408,
ແຟກສ໌: 856 21 268 001,
ມືຖື: 856 20 2999 6461
ອີ-ເມວ: sonepraseuth.niradsay@mmg.com,
ເວບໄຊທ໌ ທີ່: http://www.mmg.com/